# ກະວ່າບໍ່ຊ່າງ !!



✻ ໂດຍ ອິນທິລາ ✻

*ເຮົາຍ່າງເຂົ້າໄປກະຊວງ ດ້ວຍຄວາມຕື່ນໃຈຢາກພໍ້ອ້າຍຄຳສວັນ*

ເຮົາເລືອກມາເອົາຕອນ ເກືອບ ໙ ໂມງເຊົ້າຄືຊິພໍດີ ເພາະຄັນມາເຊົ້າກວ່ານີ້ ກໍປ້ານລາວບໍ່ທັນມາ ຄັນມາສວາຍ ກໍປ້ານລາວມີວຽກໄປກ່ອນແລ້ວ ຈະບໍ່ພໍ້ ຂອງວ່າດຽວນີ້ ລາວເປັນນາຍໃຫຍ່ແລ້ວ

"ໂຮງການລາວຄືຊິ *"ຄຶກຄັກ"* ນໍ ຊາແຕ່ເກົ່າມາຫັ້ງ ເຮົາເຄີຍຄຶດສເມີວ່າ ຄັນອ້າຍຄຳສວັນເປັນ ນາຍບ່ອນໃດ ບ່ອນຫັ້ນ ຕ້ອງມີສີມີວັນໂລດ ເພາະລາວ ເປັນຄົນເອົາວຽກເອົາການ"

ເຮົາຄິດ ພ້ອມກັບກ້າວເຂົ້າໄປໃນໂຮງການ ປລັງຕັງສາມ-ສີ່ຄົນ ນັ່ງອ້ອມໂຕະ ຊຶ່ງຕັ້ງຢູ່ຕໍ່ຫນ້າຫ້ອງ ມີປ້າຍ ຕິດວ່າ "*ຫ້ອງອະທິບໍດີ....*" ອີກຜູ່ນຶ່ງກຳລັງຈັບຟອຍຫ້ຽນ ກວາດພື້ນດິນກາໂຣ ຢ່າງຊ້າໆ ແບບແຂນ ຄໍ່ມືລ່ອຍ.

ກວາດແບບນີ້ ສົມພໍ ຂີ້ຝຸ່ນ ມັນຈຶ່ງບໍ່ຍອມອອກ ແລ້ວສີອັນສົດໃສ ອັນດັ້ງເດີມ ຂອງດິນກາໂຣມັນ ຈຶ່ງຖືກ ຂົ່ມຊູ່ບີບເຕັ່ງ ໃຫ້ຢູ່ກ້ອງຝຸ່ນຫັ້ນ ! ພື້ນຂອງໂຮງການ ຍ່ອມຖືກຍ້ອມ ໃຫ້ເປັນສີເສົ້າຫມອງໄປ...

ເຮົາຢືນຢູ່ຕໍ່ຫນ້າພວກນັ້ນບຶດນຶ່ງ ຖາມໄດ້ຄວາມວ່າ "*ອະທິບໍດີ*" ບໍ່ທັນມາ ແລ້ວພວກນັ້ນກໍມິດໄປ ເຂົາເຈົ້າເຊົາລົມກັນ ເພາະເຮົາຍັງຢືນຢູ່ຫັ້ນ ເຂົາເຈົ້າເບິ່ງເຮົາໃນຖານສົງສັຍ (?) ເຮົາບໍ່ຈັກຊິເຮັດຫຍັງ ຍ່າງໄປຫ້ອງ ຖັດກັນໄປ ຊຶ່ງປະຕູໄຂຢູ່ ເຮົາເອົາມື ເກາະຂອບປະຕູໄວ້ແລ້ວ ປ່ອນຫນ້າເຂົ້າໄປ ຫວັງຢາກໃຫ້ໃຜຈັກຄົນ ໃນເຈັດ-ແປດຄົນ ທີ່ກຳລັງຢືນອ້ອມໂຕະຫັນຫນ້າມາທາງເຮົາແດ່... ແຕ່ກໍຜິດຫວັງ... ຂະເຈົ້າກຳລັງລົມກັນນິວ...

ຊາຍສອງຄົນອອກມາຊຶ່ມກັນນອກວົງ :

- ໂຕຊິເອົາບໍ່ເດືອນນີ້ ?... ຄັນບໍ່ເອົາກັນຢາກໄດ້ ເພາະແມ່ແອຊິກັມລູກ

ຜູ່ນຶ່ງຊຶ່ມຄ່ອຍໆ ແລ້ວ...ຜູ່ຖືກຖາມຕອບວ່າ :

- ເອີ້ - ໂຕເອົາຊະຊັ້ນ ເດືອນຫນ້າເຮົາຈັ່ງຊິເອົາ...ພໍດີເດັກນ້ອຍເຂົ້າໂຮງຮຽນ ຊິເອົາໄປຕັດເຄື່ອງ ຊື້ປື້ມ ໃຫ້ເຂົາແດ່...

ແລ້ວຂະເຈົ້າ ກໍຊຽນສລາກໄປຖີ້ມຈົກກັນ ເຮຮາ ມ່ວນຊື່ນຕໍ່ໄປ...

- ໃຜຊິເອົາເລກໃດແດ່ ຂ້ອຍຊິຟ້າວໄປຂາຍທາງອື່ນ... ສາວນຶ່ງຮ້ອງໃສ່ຫມູ່

ທຳອິດເຮົາຍັງບໍ່ເຂົ້າໃຈ ຄວາມຫມາຍຂອງລາວ ແຕ່ຕໍ່ມາ ເມື່ອມີສຽງວິພາກວິຈານເຣື່ອງເລກເບີໂທ ແລະ ຂຊື້ກັນນີ່ນັ່ນ... ເຮົາຈຶ່ງເຂົ້າໃຈ ວ່ານາງຄົນຂາຍບັດເບີ...

ບ໊ໍາ ! ໂຮງການເປັນຮອດບ່ອນເຮັດຫວຍຂາຍເບີໄປຫລະຫວ໊ະ ! ເຮົາຕັດ ສິນໃຈເຄາະປະຕູ "*ກ໊ອກ ໆ*"

ສອງສາມບາດ ເພື່ອຮຽກຮ້ອງຄວາມສົນໃຈຈັກໜ່ອຍ - ນາງນິ່ງຊິງຊີເປັນສມຽນ ອະທິບໍດີອອກມາຫາເຮົາ - ເຮົາບອກຄວາມປະສົງເຮົາໄປ ແຕ່ລາວກໍຕອບໄດ້ພຽງແຕ່ວ່າ *"ອະທິບໍດີຍັງບໍ່ທັນມາ"* ເພາະລາງເທື່ອ ກໍມາເຊົ້າ ລາງເທື່ອ ກໍມາສວາຍ - *"໙ ໂມງປາຍພຸ້ນ ລະ"* ພັດວ່າ !

ນີ້ມັນກໍເກົ້າໂມງພໍດີ ເຮົາຊິຖ້າອີກຈັກບຶດ - ຫຼືດົນກໍຍັງໄດ້ - ເຮົາແຫ່ງປາກພໍ້ອ້າຍຄໍາສວັນຕື່ມຂຶ້ນອີກ

ນາງນັ້ນຍ່າງອອກຈາກເຮົາໄປຊື່ໆ - ລາວໄປນັ່ງຢູ່ໂຕະ ຕໍ່ໜ້າຫ້ອງອະທິບໍດີ ແລ້ວດຶງລິ້ນຊັກເອົາຜ້າຂຶ້ນມາແສ່ວລວດລາຍ *"ປອງເດີກຣົວ"* ເສີຍປູ່.

ເອີ້ ! ສມຽນນີ້ກະແມ່ນບໍ່ຊ່າງລົມນໍາແຂກຄົນຫລື່ນຂັ້ນປລັງຕົງນໍ້ ! ຖາມຄວາມ ກະຕອບຄວາມ...

ເຮົາເລີຍນັ່ງລົງຕັ່ງອີ້ເບາະໜ່ອຍນຶ່ງ ຫ່າງຈາກໂຕະສມຽນປະມານສອງ - ສາມແມດ.

ນັ່ງລົງແລ້ວບໍ່ມີແນວເຮັດ... ເຮົາບໍ່ໄດ້ຖືປຶ້ມຕິດມືມາອ່ານຈັກຫົວ... ໂຮງການນີ້ກະດາຍ ບໍ່ມີໜັງສືພິມລາວ ຫຼືຕ່າງຊາດ ໄວ້ໃຫ້ແຂກຄົນອ່ານຂ້າເວລາເລີຍ.

ຄາວນຶ່ງໄດ້ຍິນສຽງຍິງສາວລົມກັນ ຢ່າງອື້ນໆອອກມາຈາກຫ້ອງຖັດໄປ ຟັງໄດ້ຄວາມວ່າ ຂະເຈົ້າຊິລົງໄປກິນເຝີ - ນາງສມຽນທີ່ກໍາລັງນັ່ງ ແສ່ວຜ້າກໍແຫ່ຂບວນອອກໄປນໍາ.

"ໂທ້ ! ລົງໄປເປັນໝູ່... ແລ້ວໃຜຊິເຝົ້າຫ້ອງການ..." ເຮົາຄຶດພ້ອມກັບປາກຮູ້ ລອງໄປສ່ອງເບິ່ງຫ້ອງນັ້ນກະບໍ່ມີໃຜອີ່ຫຼີ !

*ເຈົ້ານາຍກໍບໍ່ທັນມາ - ລູກນ້ອງກະບໍ່ຢູ່ "ແມວບໍ່ຢູ່ໜູເຕັ້ນ" ເປັນທັມດາ !*

ເຈົ້ານາຍກໍແມ່ນອ້າຍຄໍາສວັນ ເຮົານີ້ຕວ່າລະ !

ເປັນໄປໄດ້ບໍ່ ທີ່ລາວຊິປ່ຽນອຸດົມຄະຕິເກົ່າໆ ໝົດແລ້ວ ?

ລືວ່າລາວຊິປ່ຽນໄປແລ້ວອີ່ຫຼືກະວ່າບໍ່ຊ່າງ ?

ອ້າຍຄຳສວັນ ຊິໃຫ້ຄວາມຜິດຫວັງແກ່ເຮົາຂນາດນີ້ຫວະ ?

ຕອນເຮົາຮູ້ຈັກກັນຢູ່ເມືອງນອກລາວເຄີຍເຮັດໃຫ້ເຮົາຮູ້ສຶກວ່າ ຊີວິດຄືຄວາມຫວັງ - ຄວາມຫວັງທີ່ ຈະເຫັນປະເທດຊາດລາວ ກ້າວຫນ້າ...

ລາວເປັນນັກສຶກສາຮຸ່ນໃຫຍ່... ໄປຢູ່ເມືອງນອກ ດົນກວ່າເຮົາ ຕອນນັ້ນລາວໄດ້ປຣິນຍາຕຣີ ແລະ ຂໍຮຽນຕໍ່ ເອົາປຣິນຍາໂທ ເຮົາຫາກໄປແຕ່ວຽງ ໄປເຂົ້າປີທີນຶ່ງ ໃນມະຫາວິທະຍາລັຍດຽວກັນ.

ລາວເປັນນັກສຶກສາຜູ່ທຳອິດ ທີ່ມີອຸດົມຄະຕິ ຄືກັນກັບເຮົາ ເຖິງແມ່ນເຮົາເປັນສາວນ້ອຍ ຜູ່ຍັງດ້ອຍໃນເຣື່ອງ ປະສົບການ ແຕ່ເຮົາກໍມີອຸດົມການ ຍຶດຖືເອົາໄວ້ເປັນຫຼັກແລ້ວ.

ເຮົານັບຖື ແລະ ເກີດຄວາມບູຊາໃນໂຕອ້າຍຄຳສວັນ ຍ້ອນລາວເປັນຜູ່ໃຫຍ່ ທີ່ມີຄວາມຄຶດຫນັກແຫນ້ນເພື່ອພັທນາສັງຄົມລາວ.

ຄວາມສນິດສນົມ ຂອງພວກເຮົາທັງສອງຕອນນັ້ນ ມີຫຼາຍຂຶ້ນ ຈົນເຮັດໃຫ້ຫມູ່ຄູ່ ພາກັນເຍີ້ຍວ່າພວກເຮົາເປັນຊູ້ກັນ ແລະຄວາມຈິງກໍມີຢູ່ແດ່ ແຕ່ພວກເຮົາຍັງຮັກສາຣະດັບມິຕພາບໄວ້ - ກະວ່າບໍ່ຊ້າງ... ຕອນຮຽນແລ້ວ ພວກເຮົາອາດຈະ... ເຮົາຍັງຄຶດຫວັງໄວ້ຈັ່ງຊັ້ນ.

ພວກເຮົາໄດ້ຮູ້ເຖິງອຸດົມຄະຕິ ອັນເປັນສ່ວນໃຫຍ່ ຂອງກັນແລະກັນ ຊຶ່ງມີຢູ່ວ່າ *ພວກເຮົາເຊື່ອວ່າຊີວິດຂອງພວກເຮົາ ເປັນຂອງສັງຄົມ.* ສະນັ້ນ ເມື່ອເຊື່ອຈັ່ງຊີ້ ກໍຄວນຖືເອົາເປັນຫນ້າທີ່ ຂອງໂຕເອງທີ່ຈະຍື່ນມືເຂົ້າຊ່ວຍແກ້ໄຂ ປັບປຸງສິ່ງໃດທີ່ຕ້ອງການຄວາມຊ່ວຍເຫຼືອຈາກເຮົາ ອ້າຍຄຳສວັນຮັກຄວາມ ສເມີພາບ ແລະເປັນຄົນເອື້ອເຟື້ອຫມູ່ຝູງດີ ລາວເປັນຄົນສລາດ ປາກຮອບຮູ້ ກອບໂກຍຫາຄວາມຮູ້ໃສ່ໂຕ ມີຄວາມສົນໃຈ ໃນສິ່ງຕ່າງ ໆ ຫຼາຍອັນ ລົມນຳລາວໄດ້ຄະຕິດີ ໆ ເທິງນັ້ນ... ລາວເປັນຄົນຫນ້າສັນລະເສີນຈັ່ງຊີ້ລະ !

ລາວມັກສໍ້ຖາມເຮົາກ່ຽວກັບຊີວິດ ຄ່າຄອງຊີບຢູ່ວຽງເພາະຈາກໄປດົນ ຈຶ່ງບໍ່ຄ່ອຍຮູ້ຂ່າວ ການປ່ຽນແປງທີ່ໃດ. ຕອນນັ້ນເຮົາເວົ້າໃຫ້ລາວຟັງວ່າ ຍັງຝືດຄືເກົ່າ *ເງິນເດືອນຂ້າຣາຊການບໍ່ພໍກິນຄືເກົ່າ ລາງຄົນ ຕ້ອງຊ*

*ອກຫາວິທີຕ່າງ ໆ ຂົນຂວາຍຫາລ້ຽງຊີບ ຈະໂດຍວິທີທຸຈລິດ ຫຼື ສຸຈລິດ ກໍຕາມແຕ່ໂອກາດອຳນວຍ.*

ຄຶດມາຮອດຄວາມລົມບ່ອນນີ້ ເຮົາກໍອົດຄຶດເຫັນພາບ ຂອງຊາຍສອງຄົນ ທີ່ອອກມາຊື່ມກັນ ແລະ ສາວຮ້ອງ ຂາຍເບີໃນໂຮງການຫວ່າງກີ້ນີ້ບໍ່ໄດ້. ການຄອງຊີບ ຢູ່ບ້ານເຮົາມັນເປັນຮ້າຍຫຼາຍກວ່າເກົ່າຕວ່າດຽວນີ້ ! ເຖິງວ່າຂ້າຣາຊການ ຊັ້ນຜູ້ນ້ອຍ ຕ້ອງຫາຂາຍເບີ ຫຼີ້ນຫວຍກັນ ຢ່າງບໍ່ຢໍາເກງ ຕໍ່ກົດຫມາຍ.

ກົດຫມາຍ ກໍກົດຫມາຍເທາະແມ້ເນາະ - ຄັນຄົນບໍ່ໄດ້ກິນເຂົ້າ - ມັນກໍຈະຕາຍ - ຄັນຕາຍແລ້ວ ໃຜຊິມາແຕ່ງ - ຮັກສາ ແລະ ໃຊ້ກົດຫມາຍລະ ?

ເຮົາຍັງຈື່ໄດ້ອີກຕອນນຶ່ງ ອ້າຍຄຳສວັນຍັງໄດ້ຖາມເຮົາເຣື່ອງ *"ໂມງລາວ"* ພວກເຮົາຫມາຍເຖິງໂມງມາການ - ເຮົາຕອບລາວໄປວ່າ *ຍັງຄືເກົ່າ* ເອົາແຕ່ຜູ້ຊິໄປ ຊິເມືອ ບໍ່ເປັນຣະບຽບ.

ລາວຖາມຕໍ່ໄປຮອດ ເຣື່ອງເຂົ້າເຮັດການຍັງ *ຫຼີ້ນພັກຫຼີ້ນພວກ* ຢູ່ຄືເກົ່າບໍ່ ?

*ຍັງຄືເກົ່າ* ! ເອົາລູກຫຼານຝາກເຂົ້າເຮັດການທັງໆທີ່ຮູ້ວ່າບໍ່ມີຄວາມຮູ້ ໃນດ້ານນັ້ນໆ... ເປັນມາແຕ່ສມັບພໍ່ຈັ່ງໃດ ສມັຍລູກກໍ່ເປັນຈັ່ງຊັ້ນລະ !.

ເຮົາບອກລາວໄປຕາມໄດ້ຍິນໄດ້ເຫັນມາ.

ອ້າຍຄຳສວັນ ນັ່ງຟັງເຮົາເວົ້າມິດໆ ແລ້ວກໍສແດງຄວາມຄຶດເຫັນອອກມາຢ່າງຫນັກແຫນ້ນວ່າ :

*"ຄັນອ້າຍໄດ້ເປັນນາຍ ອ້າຍຊິບໍ່ໃຫ້ເຣື່ອງຫມູ່ນີ້ມີຕໍ່ໄປ* ຄວາມເປັນຣະບຽບ ແລະມາຣະຍາດ ໃນໂຮງການ ຈະຕ້ອງຮັກສາກັນໃຫ້ເຄັ່ງຄັດ ຖ້າເບິ່ງໂລດເດີ້ ! ຄັນເຮັດຄືແຕ່ເກົ່າມາຫຼັງອີກ ເຮົາ ຈະບໍ່ພໍ້ຄວາມຈເຣີນແນ່ນອນ. ອ້າຍຈະຕ້ອງອົບຣົມ ສັ່ງສອນລູກນ້ອງ ໃຫ້ຮູ້ຈັກຮັກວຽກການ ແລະ ມີໃຈປາກ ປັບປຸງໂຕເອງ...

ຈັ່ງວ່າ ເຮົາວ່າ ຄັນໂຄງການໃດໄດ້ລາວໄປເປັນນາຍມີຫວັງກ້າວຫນ້າ.

ຕອນນັ້ນ - ເວົ້າອີຫຼີເທາະ - ເຮົາພາວະນາຢູ່ໃນໃຈວ່າ ສາທຸ ! ຂໍ ໃຫ້ລາວໄດ້ເປັນເຈົ້າ ເປັນນາຍ ສົມປາຖນາທ້ອນ.

ຕອນລາວມາວຽງ ເຮົາຫາກໍ່ຢູ່ປີທີສອງ.

ເຮົາຮຽນຈົບປຣິນຍາແລ້ວ ຕໍ່ເອົາວິຊາຄູອີກປີນຶ່ງ.

ເຮົາບໍ່ໄດ້ພໍ້ອ້າຍຄຳສວັນ ຮວມທັງຫມົດເປັນເວລາ ໓ ປີ ແຕ່ໃນຣະຍະນັ້ນ ພວກເຮົາກໍ່ຕິດຕໍ່ກັນທາງຈົດຫມາຍ.

ເດືອນແລ້ວນີ້ ກ່ອນມາ ເຮົາໄດ້ຂຽນບອກລາວວ່າເຊົາຮຽນແລ້ວ ແລະ ຈະມາວຽງ ເຮົາສິດຽງໆອອກ ໄປວ່າ ຢາກໃຫ້ລາວຊອກວຽກຊອກການຊ່ອຍ. ລາວກໍຟ້າວເຮົາໄປໂລດວ່າ *"ມາໂລດມາເຮັດນຳອ້າຍ"* ແຕ່ອົດແປກໃຈບໍ່ໄດ້ ທີ່ບໍ່ເຫັນລາວເວົ້າຮອດ ເຣື່ອງຄອບຄົວເລີຍ ຫຼື ວ່າລາວຍັງຄອງຄວາມເປັນໂສດຢູ່ ? ແລ້ວເຮົາກໍ ສ້າງຄວາມຫວັງຕ່າງ ໆ ຂຶ້ນໄວ້ຫຼາຍແນວ...

ກັບຄືນສູ່ສະພາບຄວາມເປັນຈິງ... ໂຮງການນີ້ມິດ !...

ເຮົາໂລດນັ່ງຝັນຢູ່ຜູ່ດຽວ ເປັນດົນເປັນນານ - ເຮົາຢ້ານເຮົາຫຼົງກະຊວງແລ້ວລະ ໂຮງການອ້ານຄຳສວັນ ຕ້ອງບໍ່ເປັນແນວນີ້ແນ່ນອນ ! ຄຶດແລ້ວ ກໍອ່າຍຫນ້າວ່າຈະຖາມນາງສມຽນນັ້ນ ເພື່ອຄວາມແນ່ໃຈ ວ່າອ້າຍຄຳ ສວັນເປັນອະທິບໍດີ ຢູ່ຫັ້ນແທ້.

ແຕ່ໂຕະສມຽນກໍຍັງກໍຍັງຫວ່າງເປົ່າຢູ່.

ເຮົາຫຼຽວເບິ່ງໂມງຢູ່ແຂນໄດ້ເກືອບ ໑໐ ໂມງແລ້ວ - ໄປກິນເຝີຍັງບໍ່ມາກັນ !

ເຮົາຄຶດຢາກໄປຫ້ອງນ້ຳ ຍ່າງເລີຍໄປທາງກ້ຳຫ້ອງສຸດເຫັນປ້າຍຕິດຢູ່ປະຕູວ່າ "ທ່ານຍິງ" ອີກປະຕູ

ນຶ່ງໃສ່ວ່າ "ທ່ານຊາຍ"

ໂທ້ ! ລາວເຮົາຈເຣີນຫຼາຍເຕີບແລ້ວ ! ແຕ່ພໍເຂົ້າໄປທາງໃນ

ມັນໄກຈາກຄວາມຈເຣີນ ຂອງຫ້ອງນ້ຳສມັຍໃຫມ່ເຂົາຫຼາຍ ກົ່ນມັນສະເອືອນ ຂອງຄວາມສົກປົກ ໃນວິດ ຫຼື ພື້ນວິດອັນທັນສມັຍແບບນັ່ງ ແຕ່ເຫັນມີຮອຍເກີບເປື້ອນ ຢຽບຢູ່ເທິງບ່ອນນັ່ງ ບໍ່ມີການອົບຮົມວິທີໃຊ້ວິດນີ້ໃຫ້ຜູ່ບໍ່ຮູ້ບໍ່ນໍ ? ເຮົາກັບອອກມາ ແລະ ຄຶດວ່າຈະເມືອສາດອກ ເກີນບໍ່ເປັນຜົນ.

ແຕ່ແລ້ວກໍເລີຍພໍດີສວນທາງກັບ ອ້າຍຄຳສວັນ ຢູ່ທາງອອກ ເຮົາຈື່ລາວໄດ້ດີ ເຖິງລາວຈະຜິວດຳໄປແດ່ແລະພີຂຶ້ນ

"ທັສພອນ" ລາວຮ້ອງຄ່ອຍໆ ຕື່ນໆ ...

"ມາແຕ່ມື້ເທີງນ້ອງ ? ບໍ່ເຫັນບອກ ອ້າຍຊິໄດ້ໄປຮັບ"

ລາວຜາຍມືຊວນເຊີນເຮົາຍ່າງເຂົ້າຫ້ອງ ອັນເປັນຫ້ອງສ່ວນຕົວຂອງລາວ ມີປ້າຍບອກວ່າ *"ອະທິບໍດີ "*

ພາຍໃນຫ້ອງຕົກແຕ່ງງົດງາມທັນສມັຍ *ໂຕະເຮັດການອອກແບບຄືປະເທດນອກ ມີເຄື່ອງອຸປກອນຢ່າງດີວາງໄວ້ເຕັມ ຖັດມາມີຊຸດຮັບແຂກໄມ້ອັດຢ່າງດີ ພົມປູພື້ນໃຫມ່ອ່ຽມ* ອ້າຍຄຳສວັນ ຍ່າງໄປ *ໄຂຈັກເຮັດອາຍເຢັນດັງອື່ນ...* ແລ້ວແຕ່ງ ໃຫ້ເຮົານັ່ງລົງຊາລົ້ງຊຸດງາມນັ້ນ

" ນ້ອງມາຮອດ ສີ່ໂມງແລງວານນີ້ ບໍ່ກ້າບອກມາ ເພາະບໍ່ຢາກໃຫ້ຍາອ້າຍເຄີກວຽກເຄີກການໄປຮັບ " ເຮົາບອກລາວຄືຈັ່ງເຮົາຄຶດໄວ້ຈັ່ງຊັ້ນແທ້.

ອ້າຍຄຳສວັນ *ຫົວຢ່າງອາຣົມດີ* ອັນນີ້ລະທີ່ລາວປ່ຽນແດ່ ແຕ່ກ່ອນ *ເຄັ່ງຂຶມ* ແຕ່ກໍ *ສຸພາບ* ສຽງຫົວຂອງລາວ ຂນະນີ້ບົ່ງບອກວ່າ *ເປັນຄົນມີອາຣົມສນຸກໂປກຣາ* ແລະ ເຫັນວ່າ ທຸກຢ່າງເປັນ ຂອງ

*ຫຼີ້ນ...*ດັ່ງໃນປໂຍກ ທີ່ລາວວ່າ :

*"ໂອ໊ຍ ຊິເປັນຫຍັງ ສຳຣັບນ້ອງອ້າຍມີເວລາສເມີ ມື້ອຶ່ງກາຫຽັງກະປະ ໄປໄດ້ລະຕີ້!"*

ເອີ້...ຫຼືວ່າ ລາວກໍຖືກສິຂອງສັງຄົມແບບລາວໆເຮົາປ້າຍເອົາແລ້ວ ! *ສັງຄົມແຫ່ງຄວາມຫຼີ້ນ*

*ຄວາມກິນ ຫັ້ນນ່ະ ...* ແລະເພື່ອຈະໄດ້ຫຼີ້ນ ກິນມ່ວນກັນຕາມຊຳບາຍ... ໃພບໍ່ມີຊອກທາງຫາ... ບໍ່ໄດ້ມາທາງຊອບ ກໍທາງໂລບທາງລ້ຽວ...?!

- ນ້ອງກິນຫຽັງແລ້ວຍັງ ໄປ໋ ອ້າຍຊິພາໄປກິນເຝີ້ຮ້ານທີ່ແຊບທີ່ສຸດໃນວຽງຈັນ ແລ້ວຕອນທ່ຽງຈັ່ງໄປ

*ກິນເຂົ້າຕົ້ມດາວວຽນ "*ເວົ້າສຸດອ້າຍຄຳສວັນກໍລຸກຂຶ້ນ ສແດງທ່າທາງໃຫ້ຮູ້ວ່າຈະໄປດຽວນັ້ນ.

*ຣົຖຍີ່ຫໍ້ແພງ ແບບອອກໃຫມ່ ຕິດປ້າຍເຫຼືອງ ມີໂຊເຟີນັ່ງປະຈຳ ພາ*

*ເຮົາ ແລະອ້າຍຄຳສວັນແລ່ນອອກຈາກໂຮງການໄປກິນເຝີ...*

ເອີນີ້ ອ້າຍຄຳວັນ ກໍເປັນໄປຄືຫມູ່ຜູ່ອື່ນ ແລ້ວຕວ່ານີ້ !

ເອົາຣົຖຫຼວງ ພາຜູ່ສາວໄປກິນເຝີ !...

ຂນາດອ້າຍຄຳສວັນ ຜູ່ມີອຸດົມຄະຕິຫນັກແຫນ້ນ ປາກສ້າງຊາດ... ຍັງເປັນໄປໄດ້ຂນາດນີ້...

ຊ່າວ່າຜູ່ອື່ນ ທີ່ບໍ່ມີອຸດົມການໄວ້ກິນເດ້ ຊິພໍຮາວໃດ ...

*ເຮົາບໍ່ປາກຄຶດເລີຍວ່າ ອ້າຍຄຳສວັນ ເລືອກກິນສິ່ງອື່ນແທນອຸດົມ*

*ການເສັຽແລ້ວ ...*

ຫຼັງຈາກມື້ນັ້ນ ເຮົາກໍທຽວມາຫາອ້າຍຄຳສວັນຢູ່ໂຮງການອີກ

ເພື່ອຢາກຮູ້ຈັກລາວຫຼາຍຂຶ້ນໃນເຣື່ອງວິງການຂອງລາວແລະເພື່ອບາງທີເຮົາພໍຈະເຂົ້າຮ່ວມໄດ້...

ອ້າຍຄຳສວັນແນະນຳວ່າເຮົາຄວນ ພັກຜ່ອນຈັກເດືອນນຶ່ງຈັ່ງມາເຮັດ ນຳລາວພີ້ແຫລະໂລດ ຖ້າບໍ່ມັກບ່ອນນຳ ລາວ ລາວຈະຝາກນຳຫມູ່ຂອງລາວ ຢູ່ກະຊວງອື່ນ ໆ ບໍ່ອຶດບໍ່ຢາກ ແຕ່ພູ່ຊິຮັບເອົາ ທະແນມວ່າລາວເອີ່ຍປາກ ບໍ໋າ !

ເຮົາບໍ່ເຈັບໃຈນຳຣະບົບການ *"ຝາກ"* ແລ້ວລະ. ອ້າຍຄຳສວັນກຳລັງຈະໃຊ້ອິດທິພົນສ່ວນໂຕ ກ່ວາໄດ້...ທັງ ໆ ທີ່ເຮົາແຄງໃຈໃນທ່າທີ ແລະ ຄວາມປ່ຽນແປງໃນອຸດົມການຂອງລາວ ເຮົາກໍຍັງໄປມານຳລາວແດ່ຢູ່ ຈົນມີສຽງດັງ ທີ່ວອງ ວ່າພວກເຮົາຊິເອົາກັນ ໃນໄວໆນີ້ ຄວາມສນິດສນົມຂອງພວກເຮົາ ອາດເນື່ອງມາຈາກຫຼາຍແນວ ເຮົາຮູ້ ຢູ່ແກ່ໃຈວ່າເຮົາເຫງົາ ເຮົາຍັງເປັນໂສດ ແລະ ຕ້ອງການຫມູ່ເພື່ອນ ອ້າຍຄຳສວັນກໍຕິດຕາມເຮົາ ເກືອບຕລອດເວລາ ຜູ່ຍິງເປັນແນວນີ້ເອງ ລາງເທື່ອກໍຄຶດຫຼົງອີ່ດູຕົນ ຜູ່ຊາຍທີ່ມາເຮັດດີນຳໂຕ ວ່ານັ້ນເປັນຄວາມຮັກອັນແທ້ຈິງ ລາງຄົນ ຄຶດໄດ້ກ່ອນກິນດອງ ກໍປ່ຽນໃຈໄດ້ໃຫມ່ ແຕ່ອີກລາງຄົນ ກິນດອງໄປແລ້ວ ຈຶ່ງຮູ້ວ່າໂຕເອງບໍ່ໄດ້ຮັກ ພຽງແຕ່ດູຕົນ ຊຶ່ງໆ ບັນຫາຕ່າງໆໃນຊີວິດຄູ່ຈຶ່ງເກີດຂຶ້ນ...

ອ້າຍຄຳສວັນເຄີຍ ຂໍຮ້ອງເຮົາຫມັ້ນກັບລາວ ເພື່ອຄວາມແນ່ໃຈຂອງລາວເອງ. ສຳລັບເຮົາເອງ – ຫມັ້ນຫຼືບໍ່ ຫມັ້ນມີຄ່າທ່ກັນ ລາວຍັງບໍ່ພໍໃຈ ທີ່ເຮົາໄດ້ບອກໄປຈັ່ງຊັ້ນ ຈົນເຮົ າໄດ້ບອກຄວາມຈິງໃຈຂອງເຮົາ ໃຫ້ລາວຟັງວ່າ ລາວເປັນຜູ່ຊາຍ ທີ່ເຮົາທີ່ເຮົາຈະຄຶດຮອດຫາກ່ອນຫມູ່ ຖ້າເຮົາຈະມີຄູ່ຊີວິດ ແລະ ເຮົາກໍກຳລັງຄຶດຢູ່ດຽວນີ້ ເຮົາບອກລາວວ່າ ພວກເຮົາຄວນເບິ່ງກັນໄປອີກກ່ອນ ລາວຈຶ່ງເຊົາຊຽວຂອດເຣື່ອງຫົວໃຈເຮົາ ອອກໄປໃສຕໍ່ໃສ ກັບລາວຕາມລຳພັງ ຈົນມື້ນຶ່ງ ເຮົາມີໂອກາດໄປຢາມເຮືອນລາວ ຊຶ່ງເປັນ *" ວິລລ່າ " ຂອງຫຼວງ ປຸກໃຫ້ ຂ້າຣາຊ ການ ຊັ້ນປັນຍາຊົນຄືລາວຢູ່.*

ພາຍໃນເຮືອນຫຼັງໃຫຽ່ (ໂພດ) ສຳລັບຊາຍໂສດຄືລາວ ຕົກແຕ່ງດ້ວຍເຄື່ອງເຮືອນຣາຄາແພງ ແລະ ມີຣົສ ນິຍົມສູງ ມີແອຣ໌ດັບຄວາມຮ້ອນ – ຫ້ອງຮັບແຂກປູພົມ – ສິດຽວກັນກັບ ປູຢູ່ຫ້ອງການຂອງລາວ ມີຮ້ານບາຣ໌ ຕັ້ງຢູ່ແຈນຶ່ງ ແລະ ແກ້ວເຫຼົ້າຝຣັ່ງຢ່າງດີ ລຽນຢູ່ເທິງຮ້ານນັ້ນ ດອກໄຟແບບລີ່ຂື້ນລີ່ລົງກໍມີ... *ມັນເປັນເຮືອນ ມະນຸດ*

24 / VII

*ເຈົ້າສຳລານ ທັນດານີ້ເອງ*

*ຄວາມມັກຍັດ ອັດຣີ ຂອງອ້າຍຄຳສວັນໄປໃສຫມົດແລ້ວ ?*

ແມ່ນຫຼັງດຶງມັນເຂົ້າປ່າໄປແລ້ວ ? ບັດນີ້ເປັນທີ່ແນ່ໃຈແລ້ວ ວ່າອ້າຍອ້າຍຄຳສວັນເລືອກເອົາຄວາມສຸກຂອງຮ່າງກາຍ...ແທນຈຸດົມຄະຕິອັນສູງສົ່ງຄືແຕ່ກີ້.

ທຸກເທື່ອທີ່ເຮົາເຫັນຄວາມຟູມເຟືອຍຂອງມະນຸດ ເຮົາເສົ້າ ເຮົາເຫງົາໃຈ ແລະຄຽດ... ຄຽດໃຫ້ໃຜກໍໄດ້... ດັ່ງກັບວ່າ *ວັດຖຸອັນງົດງາມ ທັນສມັຍທີ່ຕັ້ງເອີ້ຢູ່ນັ້ນ ເປັນກະຈົກໃຫ້ເຮົາສ່ອງ ເຫັນພາບຄວາມອຶດຢາກ ເຂັນໃຈ ຂອງຊີວິດຄົນອີກຈຳພວກນຶ່ງທີ່ຖືກລືມ*

ແລະເທື່ອນີ້ ອາຣົມຂອງເຮົາກຳລັງຟົດຂຶ້ນພາຍໃນ ສີຫນ້ານິດຂີມ... ເຮົາຍ່າງໄປຢືນຕໍ່ຫນ້າບາຣ໌... ໂຕແຂງດ້ວຍຄວາມ *ຄຽດທີ່ບຸກຄົນຜູ່ເຮົາສັດທານາດົນນານມາປ່ຽນເປັນເຊັ່ນ ນີ້...* ເຮົາບໍ່ທັນໄດ້ສັງເກດວ່າ ອ້າຍຄຳສວັນ ເຂົ້າມາຫາເຮົາແຕ່ຍາມໃດ ລາວເອົາມື ມາຈັບບ່າໄຫຼ່ ພ້ອມທັງຊື່ມໃກ້ ໆ ຫູ ດ້ວຍສຽງອ່ອນນອນ ອ່ອນຫວານວ່າ :

" ທັສພອນ... ອ້າຍຮັກນ້ອງເຫຼືອທີ່ສຸດ... ອ້າຍພ້ອມສເມີທີ່ຈະຈັດການກິນດອງກັບນ້ອງ..." ເຮົາບໍ່ປາກ ຢືນໃຫ້ລາວຈັບບ່າຢູ່ຈັ່ງຊັ້ນ ລາວຈຶ່ງ ໂອບແຂນລາວເຂົ້າກອດເຮົາໄວ້ ເຮົາບໍ່ໄດ້ສະແດງຄວາມບໍ່ພໍໃຈ ຫຼື ທຳທ່າຈະຟົດຫນີຈາກອ້ອມກອດຂອງລາວ.

ລາວກອດເຮົາແຫນ້ນເຂົ້າ ອາຣົມເຮັ່ງຮ້ອນຕາມປະສາຂອງສັນດານຜູ່ຊາຍ (ທີ່ກຳລັງຫິວ) ພ້ອມທັງຊື່ມສຽງອ່ອນນອນ ອອກມາອີກ

- ຢ່າທໍຣະມານໃຈອ້າຍ ຕໍ່ໄປອີກເລີຍ ທັສພອນເປັນຂອງອ້າຍເທາະຄືນນີ້ !

ວ່າແລ້ວລາວກໍທຳທ່າຈະພາເຮົານັ່ງລົງຊາລົງຊຸດງາມນັ້ນ ເຮົາຈຶ່ງຖືໂອກາດ ຍູ້ຫນ້າເອິກລາວອອກຄ່ອຍໆ

ຊຶ່ງລາວກໍຖອຍອອກໂດຍດີ ຈະຍ້ອນຄວາມຄິດວ່າ *"ຈະກິນເປັນໆ"* ລະຄືນນີ້ ຫຼື ຈະຍ້ອນເຫັນເຮົາເຮັດ ຊິງ ມີຄວາມປອງດອງກັບລາວຢູ່ແດ່... ເຮົາຖາມລາວອອກໄປ ດ້ວຍສຽງທັມດາ...

"ອ້າຍຄິດວ່າອ້າຍເຫມາະສົມກັບນ້ອງແລ້ວບໍ່ ? " ເຮົາຖາມມີນັຍເພື່ອຢາກໃຫ້ລາວຄິດຄືນຫຼັງວ່າ

ເຮົາເປັນຜູ່ຍິງແບບໃດ *ລາວຄວນຮູ້ດີວ່າເຮົາຄົບກັຍລາວສມັຍແຕ່ກີ້ ຍ້ອນວ່າເຮົາມີ ອຸດົມການ ຄ້າຍຄືກັນ...* ບໍ່ແມ່ນຍ້ອນຫຽັງອື່ນ... ລາວຄືຊິລືມ ອຸດົມການຫມົດແລ້ວລະ ຈຶ່ງເວົ້າອອກມາ ຢ່າງພາກພູມໃຈວ່າ :

"ຜູ່ຍິງທີ່ມາມັກອ້າຍມີບໍ່ອືດ ພໍ່ແມ່ຂະເຈົ້າຊິຍົກໃຫ້ລ້າໆກໍມີ ແຕ່ອ້າຍບໍ່ຢາກເອົາ ລາງຄົນງາມແຕ່ບໍ່ມີສົມ

ບັດ ຄວາມຮູ້ຫຽັງ ນ້ອງນີ້ມີຄວາມຮູ້ສູງ ຮູບໂສມກໍອວດໄດ້ ເຮົາເຫມາະສົມກັນດີທີ່ສຸດ ອ້າຍມີຫນ້າທີ່ການສູງ ພໍທີ່ຈະໃຫ້ຄວາມສຸກແກ່ນ້ອງຕາມຄວາມພໍໃຈຂອງນ້ອງ ໂດຍທີ່ນ້ອງເອງບໍ່ຕ້ອງເຮັດການກໄດ້ ຖ້ານ້ອງປະສົງຈັ່ງ ຊັ້ນອ້າຍຂໍຮັບຮອງ"

ອາ ! ອ້າຍຄໍາສວັນ ແມ່ນແຕ່ລົມຫັນໃຈຂອງລາວກໍເປັນທາສຂອງວັດຖຸໄປແລ້ວ

*ຄວາມເຫມາະສົມໃນສາຍຕາຂອງສັງຄົມ*

*ຫນ້າທີ່ການດີແລະເງິນເດືອນ*

*ທີ່ຫມາຍຈະເອົາມາສນອງຄວາມສຸກສ່ວນໂຕ*

*ນີ້ຄືຊີວິດຈິດໃຈລາວດຽວນີ້ ! ນີ້ຄືສິ່ງທີ່ລາວເອີ້ນວ່າ "ຄວາມຮັກ"*

ລາວຮັກເຮົາຍ້ອນເຮົາມີຄວາມເຫມາະສົມຕ່າງຫາກ ຖ້າຄວາມເຫມາະສົມນັ້ນຫມົດໄປເດ້ - ຄວາມຮັກ

ຈະມີຢູ່ບໍ່ ? - ເຮົາຫມົດກໍາລັງໃຈທີ່ຈະປ່ຽນແປງຄວາມຄິດຂອງລາວແລ້ວລະ !

ອ້າຍຄໍາສວັນຫຽັບເຂົ້າມາໃກ້

ຈັບມືເຮົາຂຶ້ນທັງສອງດ້ວຍຄວາມຮ້ອນຮົນອີກ ເຮົາເຂົ້າໃຈເຈຕນາຂອງລາວດີ ຈຶ່ງເວົ້າອອກໄປຕາມ

ຄວາມ ຄຶດໃນເວລານັ້ນວ່າ :

– ຖ້າອ້າຍປາຖນາແຕ່ພຽງຮ່າງກາຍຂອງນ້ອງ ອ້າຍກໍຈະໄດ້ແຕ່ຮ່າງກາຍຂອງນ້ອງເທົ່ານັ້ນລະ...ນ້ອງອາດຈະເປັນເມັຽຂອງອ້າຍໃນຄືນນີ້ຫຼືຄືນໃດກໍໄດ້ ແຕ່ມັນຈະມີປໂຍດຫຽັງຂຶ້ນມາ ໃນເມື່ອນ້ອງກໍເປັນຜູ່ຍິງສມັຍໃຫມ່ພໍທີ່ຈະຖືວ່າການເສັຽໂຕໃຫ້ອ້າຍ ເປັນເຣື່ອງບໍ່ສຳຄັນ ແລະ ການເປັນເມັຽອ້າຍຈະບໍ່ເປັນສິ່ງຜູກມັດ ໃຫ້ນ້ອງໄປຟ້ອງກິນດອງກັບອ້າຍ ຫຼື ອ້າຍຟ້ອງກິນດອງກັບນ້ອງ ຖ້າສົມມຸດວ່າ ເຮົາບໍ່ມີຄວາມຮັກແທ້ຕໍ່ກັນ ອຸດົມຄະຕິທີ່ອ້າຍເຄີຍບຶດຫມັ້ນ ອ້າຍກໍລືມມັນແລ້ວ (ແລ້ວ ເຮົາກໍເວົ້າເຫດການ ອັນເຮົາໄປເຫັນຢູ່ໂຮງການໃຫ້ລາວຟັງ) *ແລ້ວນ້ອງຢາກຖາມອ້າຍວ່າ ອ້າຍມີຫຽັງທີ່ເຫຼືອໄວ້ ໃຫ້ນ້ອງນັບຖື ແລະ ພາກພູມໃຈ ໃນໂຕອ້າຍ. ໃນໂຕອ້າຍອັນໃດບໍ່ແມ່ນຍົສສັກ ເງິນຄຳອັນເປັນສິ່ງນອກ ກາຍຫັ້ນ ?*

ໂອ ! ສາທຸ – ຂໍຢ່າໃຫ້ອ້າຍຄຳສວັນຕອບວ່າ ລາວກັບເຮົາເຫມາະສົມກັນ ບໍ່ຈຳເປັນຈະ ມີຄວາມຮັກຄວາມນັບ ຖືອັນເລີກເຊິ່ງ ... ເຮົາຢ້ານ ຢ້ານລາວຈະຕອບແບບນັ້ນ ເພາະຖ້າລາວຕອບແບບນັ້ນ ກໍຫມາຍຄວາມວ່າ .....

*ແລ້ວເຮົາຊິທົນໄດ້ຈັ່ງໃດ ຖ້າວ່າໂຕເອງຖືກຝາກເຂົ້າປະຈຳກະຊວງໃດກະຊວງນຶ່ງ ໃນຖານຄົນພິເສດ...ແລະມີຊີວິດຢູ່ເພື່ອເປັນດອກໄມ້ເອ້ ປະດັບ ຫນ້າອ້າຍຄຳສວັນທໍ່ນັ້ນ... ອຸດົມການເຮົາ ຈະເອົາເຊື່ອງໄວ້ໃສ ? ... ວ່າບໍ່ຊ່າງ.. .ກະວ່າບໍ່ຊ່າງ !! ຄັນເຮົາເກີດກິນອຸດົມຄະຕິໄປບໍ່ໄດ້ຄືຫມູ່... ກະໃຫ້ມັນຮູ້ຊື່ະ !!!!*